## Special Economic Zone, Lecture 14th: Experiences from neighbouring countries

### 1. ຄວາມຮູ້ ແລະ ປະສົບການໃນການພັດທະນາເຂດເສດຖະກິດພິເສດ ຂອງບັນດາປະເທດເພື່ອນບ້ານ.

ການພັດທະນາພື້ນທີ່ໃຫ້ກາຍເປັນເຂດເສດຖະກິດພິເສດ ນັບວ່າເປັນການກະຕຸ້ນການເຕີບໂຕທາງດ້ານເສດຖະກິດ, ການຄ້າ, ການລົງທຶນ ແລະ ການສ້າງວຽກເຮັດງານທຳ. ແນວໃດກໍ່ຕາມ, ປັດໄຈທີ່ຈະໃຫ້ມີຄວາມສຳເລັດນັ້ນ ຕ້ອງໄດ້ມີການສຶກສາ ແລະ ວາງຍຸດທະສາດໃນການພັດທະນາ, ແຕ່ການພັດທະນາເຂດດັ່ງກ່າວນີ້ ແມ່ນຈະນຳມາຊຶ່ງໂອກາດທີ່ເປັນຜົນດີຕໍ່ເສດຖະກິດ ແຕ່ອີກດ້ານໜຶ່ງກໍ່ມີຜົນກະທົບທີ່ຕາມມາເປັນຕົ້ນຜົນກະທົບທາງດ້ານສັງຄົມ ຊຶ່ງຈຳເປັນຕ້ອງໄດ້ພິຈາລະນາ ແລະ ສຶກສາເພື່ອບໍ່ໃຫ້ມີຜົນກະທົບຕໍ່ກັບວິຖີການດຳລົງຊີວິດຂອງປະຊາຊົນທີ່ດຳລົງຊີວິດຢູ່ໃນເຂດດັ່ງກ່າວນັ້ນ. ໃນການພັດທະນາ ເສດຖະກິດໃນຮູບແບບນີ້ຕ້ອງໄດ້ສຶກສາໃຫ້ລະອຽດ ແລະ ສົມທຽບກັບຕ່າງປະເທດ ທີ່ມີປະສົບການທາງດ້ານນີ້ມາກ່ອນ, ແລະ ຮັບປະກັນບໍ່ໃຫ້ມີຜົນກະທົບອັນໃຫ່ຍຫຼວງຕໍ່ສັງຄົມ ແລະ ສິ່ງແວດລ້ອມ. ການກຳນົດ ແລະ ສ້າງຕັ້ງເຂດດັ່ງກ່າວນີ້ຈະເຮັດໃຫ້ເພີ່ມປະລິມານ ແລະ ມູນຄ່າການຄ້າເພີ່ມຂຶ້ນ, ມີການບໍລິການທີວ່ອງໄວ, ສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ແລະ ເຮັດໃຫ້ການລົງທຶນເພີ່ມຂຶ້ນ; ລາຍໄດ້ຈາກການທ່ອງທ່ຽວຈະເພີ່ມຂຶ້ນ ມີການເຊື່ອມໂຍງການທ່ອງທ່ຽວໃນພາກຫຼາຍຂຶ້ນ, ເຮັດໃຫ້ບັນຍາກາດໃນການທ່ອງທ່ຽວມີການຂະຫຍາຍຕົວຢ່າງໄວວາ; ລາຍໄດ້ຈາກການເກັບພາສີຈະເພີ່ມຂຶ້ນ, ປະຊາຊົນມີຄຸນນະພາບຊີວິດທີ່ດີຂຶ້ນ, ມີວຽກເຮັດງານທຳ ແລະ ທຸລະກິດໃໝ່ເກີດຂຶ້ນ, ມີການພັດທະນາຕົນເອງທາງດ້ານພາສາ ແລະ ທັກສະ ເພື່ອປັບໃຫ້ທັນກັບການຈະເລີນເຕີບໂຕຂອງເສດຖະກິດ ແລະ ການປ່ຽນແປງທີເກີດຂຶ້ນ; ມີໂຄງການໃຫ່ຍໆເກີດຂຶ້ນ ຕາມນະໂຍບາຍ ແລະ ແຜນຍຸດທະສາດການພັດທະນາ.

ຜົນປະໂຫຍດຈາກເຂດດັ່ງກ່າວ ລາຍໄດ້ຈາກການແລກປ່ຽນເງິນຕາຕ່າງປະເທດ, ການສ້າງວຽກເຮັດງານທຳ, ລັດຖະບານມີລາຍໄດ້ເພີ່ມຂຶ້ນ, ການຂະຫຍາຍຕົວຂອງການສົ່ງອອກ, ການຍົກລະດັບທາງດ້ານຄວາມຮູ້ ແລະ ທັກສະ, ການໂອນເຕັກໂນໂລຢີ, ຍົກສູງປະສິດທິຜົນດ້ານການຄ້າຂອງບັນດາບໍລິສັດພາຍໃນປະເທດ

ການກຳນົດເຂດເສດຖະກິດພິເສດ ອາດຈະສົ່ງຜົນກະທົບຕໍ່ປະຊາຊົນທີດຳລົງຊີວິດຢູ່ໃນເຂດດັ່ງກ່າວເນື່ອງຈາກວ່າເຂດດັ່ງກ່າວ ເປັນເຂດທີ່ມີເນື້ອທີ່ກ້ວາງ ແລະ ຈະເຮັດໃຫ້ວິທີການດຳລົງຊີວິດຂອງປະຊາຊົນໃນເຂດດັ່ງກ່າວນັ້ນມີການປ່ຽນແປງທາງດ້ານວັດທະນາທຳ ເພາະວ່າເຂດນັ້ນຈະຖືກພັດທະນາໃຫ້ເປັນເຂດອຸດສະຫະກຳທີ່ທັນສະໄໝ, ກະສິກຳສະອາດ, ການທ່ອງທ່ຽວ ແລະ ອື່ນໆ. ຜູ້ພັດທະນາ ແລະ ຜູ້ລົງທຶນໃນເຂດນີ້ຈະໄດ້ຜົນປະໂຫຍດຈາກນະໂຍບາຍທາງດ້ານພາສີ, ການຈ້າງແຮງານລາຄາຖືກ.

ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະຢູ່ທຸກຂົງເຂດທີ່ສ້າງຂຶ້ນກັບເງື່ອນໄຂ ແລະ ສະພາບແວດລ້ອມຫຼາຍຢ່າງ. ດັ່ງນັ້ນ, ການກຳນົດທີ່ຕັ້ງ ແລະ ເປົ້າໝາຍການພັດທະນາເຂດເສດຖະກິດ ພິເສດ ແລະ ເຂດເສດຖະກິດສະເພາະ ແຕ່ລະເຂດຈຶ່ງມີຄວາມສຳຄັນ, ໂດຍທົ່ວໄປແລ້ວປະເທດທີ່ປະສົບຜົນສຳເລັດໃນການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນບັນດາປະເທດທີ່ມີ ເຂດແດນຕິດກັບແຄມທະເລ ເພາະມີຄວາມສະດວກຕໍ່ການນຳເຂົ້າ-ສົ່ງອອກ ແລະ ຂົນສົ່ງສິນຄ້າ; ເຊິ່ງເຮັດໃຫ້ຕົ້ນທຶນການຜະລິດຕ່ຳ, ສາມາດແຂ່ງຂັນໄດ້ທາງດ້ານລາຄາ. ສຳລັບເຂດທີ່ຕັ້ງຢູ່ໄກທະເລ ແຕ່ມີເງື່ອນໄຂທີ່ເໝາະ ສົມ, ມີນະໂຍບາຍສົ່ງເສີມທີ່ດີເຊັ່ນ: ພາສີ-ອາກອນ, ການຕະຫຼາດ, ການໂຄສະນາ, ມີສະຖຽນລະພາບທາງດ້ານ ການເມືອງ, ມີບຸກຄະລາກອນທີ່ມີຄວາມສາມາດ, ມີກົນໄກການບໍລິຫານຄຸ້ມຄອງທີ່ກະທັດຮັດ, ບໍ່ຜ່ານຫຼາຍຂັ້ນຕອນ, ສາມາດຕັດສິນບັນຫາໄດ້ໄວ ໂດຍການຍຶດຖືຫຼັກການບໍລິຫານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະແບບທຸລະກິດ ແຕ່ຢູ່ພາຍໃຕ້ແນວທາງນະໂຍບາຍ ແລະ ການຄວບຄຸມຂອງລັດຖະບານກໍສາມາດ ພັດທະນາ ແລະ ປະສົບຜົນສຳເລັດໄດ້.

ປັດຈຸບັນ ສປປ ລາວ ໄດ້ເຂົ້າເປັນສະມາຊິກອາຊຽນ ແລະ ເປັນປະເທດໜຶ່ງທີ່ມີບົດບາດສຳຄັນໃນອາຊຽນ ເນື່ອງຈາກວ່າ ສປປລາວ ຍັງເປັນປະເທດທີ່ມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ,ມີຄວາມສະຫງົບທາງດ້ານການເມືອງ ແລະ ມີນະໂຍບາຍສົ່ງເສີມການລົງທຶນທີ່ສູງ ແລະ ພື້ນຖານໂຄງລ່າງກໍ່ໄດ້ຮັບການປັບປຸງເພື່ອເອື້ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນ. ການຈັດຕັ້ງເຂດເສດຖະກິດພິເສດ ແມ່ນມີປະໂຫຍດຢ່າງໃຫ່ຍຫຼວງໃຫ້ແກ່ລະບົບເສດຖະກິດຂອງ ສປປ ລາວ ໂດຍສະເພາະແມ່ນການຜະລິດສິນຄ້າເພື່ອສົ່ງອອກ, ການນຳເຂົ້າ ແລະ ການບໍລິການ. ເນື່ອງຈາກວ່າ ການກຳນົດສ້າງຕັ້ງເຂດດັ່ງກ່າວ ແມ່ນ ເພື່ອເໜັ້ນການຜະລິດຜົດເປັນສິນຄ້າໂດຍມີນະໂຍບາຍສົ່ງເສີມໃຫ້ນຳໃຊ້ວັດຖຸດິບພາຍໃນປະເທດ ເພື່ອແປຮູບເປັນຜະລິດຕະພັນສຳເລັດຮູບ ແລະ ເຄິ່ງສຳເລັດຮູບ, ແລະມີນະໂຍບາຍຫຼຸດຜ່ອນພາສີໃນການນຳເຂົ້າກົນຈັກ ຫຼື ເຕັກໂນໂລຊີ ເພື່ອມາຮັບໃຊ້ໃຫ້ແກ່ການຜະລິດ, ການພັດທະນາເຂດເສດຖະກິດພິເສດ ແມ່ນເປັນການພັດທະນາພື້ນຖານໂຄງລ່າງ, ເພື່ອດຶງດູດການລົງທຶນຈາກຕ່າງປະເທດ, ການທີ່ ສປປລາວ ມີນະໂຍບາຍ ຫຼື ສ້າງຕັ້ງເຂດເສດຖະກິດພິເສດຂຶ້ນມາ ເນື່ອງຈາກວ່າ ສປປລາວ ຕ້ອງການໃຫ້ພາກເອກະຊົນ ຜູ້ທີ່ມີຄວາມອາດສາມາດ ໃນການພັດທະນາ ເປັນຕົ້ນ ແມ່ນ ດ້ານທຶນຮອນ: ເຕັກໂນໂລຊີ, ວິຊາການ ແລະ ປະສົບການ ໂດຍທີ່ລັດຖະບານ ໃຫ້ນະໂຍບາຍຫຼຸດຜ່ອນທາງດ້ານພາສີສ່ວຍສາອາກອນ, ສິດນຳໃຊ້ທີ່ດິນ ແລະ ຄວາມເປັນອິດສະຫຼະໃນການບໍລິຫານຈັດການ ແລະ ຄຸ້ມຄອງເຂດດັ່ງກ່າວໃນລະດັບສູງນັ້ນ ເພື່ອຮັບປະກັນໃຫ້ ການສ້າງຕັ້ງເຂດດັ່ງກ່າໄດ້ຮັບປະສິດທິພາບສູງ.

ໃນອານາຄົດ, ສປປລາວ ອາດຈະກາຍເປັນສູນກາງ ຫຼື ປະເທດທີ່ມີຄວາມສຳຄັນໃນການໃຫ້ບໍລິການໃນການສົ່ງອອກສິນຄ້າ ຂອງ ອາຊຽນໄປສູ່ ສປປ ຈີນ ເນື່ອງຈາກວ່າລັດຖະບານໄດ້ມີການພັດທະນາພື້ນຖານໂຄງລ່າງ ເພື່ອຮັບປະກັນໃຫ້ແກ່ການສົ່ງອອກ ແລະ ນຳເຂົ້າສິນຄ້າມີຄວາມສະດວກສະບາຍຫຼາຍກວ່າໄລຍະທີ່ຜ່ານມາ ເປັນຕົ້ນແມ່ນເສັ້ນທາງລົດໄຟຄວາມໄວສູງ ລາວ-ຈີນ ກໍ່ເປັນຈຸດໜຶ່ງທີ່ຈະເຮັດໃຫ້ເສດຖະກິດຂອງລາວມີຄວາມເຕີບໂຕໃນລະດັບທີ່ໄວພໍສົມຄວນ ຈາກໄລຍະທີ່ຜ່ານມາ ສປປລາວ ມີຄວາມເສຍປຽບໃນການພັດທະນາທາງດ້ານເສດຖະກິດເນື່ອງວ່າ ເປັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ການຂົນສົ່ງ ຫຼື ສົ່ງອອກສິນຄ້າ ມີຄວາມລຳບາກ ຊຶ່ງເຮັດໃຫ້ຄວາມສົນໃຈທີ່ຈະເຂົ້າມາລົງທຶນຂອງຕ່າງປະເທດມີໜ້ອຍ ແຕ່ປັດຈຸບັນນີ້ ລາວໄດ້ກາຍເປັນປະເທດທີ່ຕ່າງປະເທດໃຫ້ຄວາມສົນໃຈຫຼາຍ.

ການທີ່ມີນະໂຍບາຍເປີດກວ້າງໃຫ້ຜູ້ລົງທຶນຕ່າງປະເທດ ມາລົງທຶນໃນໂຄງການຕ່າງໆ ຂອງລັດຖະບານ ເຊັ່ນ: ລົງທຶນໃນເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ໂຄງການສ້າງເຂື່ອນໄຟຟ້ານ້ຳຕົກ ແລະ ໂຄງການຕ່າງໆຂອງລັດຖະບານ ກໍ່ເປັນອີກບາດກ້າວໜຶ່ງທີ່ຈະເຮັດໃຫ້ພື້ນຖານໂຄງລ່າງທາງດ້ານເສດຖະກິດໄດ້ມີການພັດທະນາ ປັບປຸງໃຫ້ມີຄວາມເຂັ້ມແຂງຂຶ້ນ.

ເນື່ອງຈາກວ່າ ການສ້າງຕັ້ງເຂດເສດຖະກິດພິເສດ ເປັນການສົ່ງເສີມການລົງທຶນໃນປະເທດ ເປັນການຂຸດຄົ້ນທ່າແຮງ ແລະ ຄວາມອາດສາມາດຂອງບຸກຄະລະກອນພາຍໃນໃຫ້ມີສ່ວນຮ່ວມໃນການພັດທະນາຫຼາຍຂຶ້ນ ແລະ ເປັນການສະໜັບສະໜູນໃຫ້ການສ້າງຕັ້ງປະຊາຄົມເສດຖະກິດອາຊຽນມີຄວາມສຳເລັດໃນລະດັບທີ່ດີ.

ນອກຈາກນີ້, ກໍ່ເປັນການສົ່ງເສີມການສົ່ງອອກ, ສາມາດຫຼຸດຜ່ອນຕົ້ນທຶນໃນການຜະລິດເພາະມີນະໂຍບາຍໃຫ້ນຳໃຊ້ວັດຖຸດິບທີ່ສາມາດຕອບສະໜອງຈາກພາຍໃນ ແລະ ແຮງງານພາຍໃນປະເທດ ແລະ ແຮງງານທີ່ມີສີມື, ມີປະສິດທິພາບຈາກຕ່າງປະເທດ; ເປັນການສົ່ງເສີມໃຫ້ມີການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝໃນການຜະລິດສິນຄ້າຈາກຕ່າງປະເທດເຂົ້າໃນການດຳເນີນການຜະລິດໃນ ສປປລາວ ດ້ວຍການມີນະໂຍບາຍພິເສດໃນການນຳເຂົ້າອຸປະກອນຕ່າງໆ ທີ່ນຳເຂົ້າມາເພື່ອການຜະລິດສິນຄ້າ; ເປັນສູນກາງໃນການຈຳໜ່າຍສິນຄ້າໄປສູ່ປະເທດຕ່າງໆໃນອາຊີຕາເວັນອອກ ແລະ ສປປ ຈີນ ແລະ ພາໃຫ້ມີການຈ້າງງານໃນ ສປປລາວ ເພີ່ມຂຶ້ນ.

ປະເທດກຳປູເຈຍ ກໍ່ເປັນອີກປະເທດໜຶ່ງ ທີ່ໃຫ້ຄວາມສຳຄັນໃນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນ, ຊຶ່ງລັດຖະບານກໍ່ໃຫ້ຄວາມສຳຄັນໃນການພັດທະນາເສດຖະກິດໃນທົດສະຕາວັດທີຜ່ານມາ. ການປະຕິຮູບທາງດ້ານເສດຖະກິດໄດ້ມີການຈັດຕັ້ງປະຕິບັດ ແລະ ເສີມສ້າງເພື່ອຮັກສາໃຫ້ໄດ້ການແຂ່ງຂັນທີ່ໄດ້ປຽບໃນລະດັບພູມມິພາກ ເປັນຕົ້ນແມ່ນ ປະເທດ ມຽນມ້າ ແລະ ສສ ຫວຽດນາມ, ຊຶ່ງປະເທດເຫຼົ່ານີ້ມີຈຸດພິເສດທີຄ້າຍຄືກັນຄືມີຄວາມພ້ອມທາງດ້ານແຮງງານທີສາມາດຕອບສະໜອງໃຫ້ແກ່ພາກອຸດສະຫະກຳ (ອີງຕາມຂໍ້ມູນຈາກທະນາຄານໂລກ, ປີ 2014). ຖືໄດ້ວ່າເປັນປັບປຸງພື້ນຖານໂຄງລ່າງການລົງທຶນ ໃຫ້ແກ່ການລົງທຶນພາຍໃນ ແລະ ຕ່າງປະເທດ. ນອກຈາກນີ້, ເຂດດັ່ງກ່າວຍັງເປັນເຄື່ອງມື ໃນການສ້າງຈຸດເຊື່ອມໂຍງທາງດ້ານເສດຖະກິດທີ່ສຳຄັນລະຫວ່າງ ຕົວເມືອງ, ຊົນນະບົດ ແລະ ເຂດຫ່າງໄກຊອກຫຼີກ.

ຕາມກົດໝາຍຂອງປະເທດ ກຳປູເຈຍໄດ້ກຳນົດ ເຂດເສດຖະກິດພິເສດ ໃຫ້ເປັນເຂດພື້ນທີ ພິເສດ ສຳລັບການພັດທະນາຂະແໜງເສດຖະກິດ ຊຶ່ງມີອຸດສະຫະກຳ ແລະ ກິດຈະກຳຕ່າງໆທີ່ກ່ຽວຂ້ອງ ໃນນີ້ອາດຈະລວມເອົາເຂດອຸດສະຫະກຳ ຫຼື ເຂດສົ່ງອອກສິນຄ້າ, ເຂດເສດຖະກິດພິເສດແຕ່ລະເຂດ ແມ່ນຈະມີເຂດຖ່າຍໂອນສິນຄ້າ, ເຂດການຄ້າເສລີ, ເຂດບໍລິການ, ເຂດທີຢູ່ອາໄສ ແລະ ເຂດອຸດສະຫະກຳການທ່ອງທ່ຽວ.

ອີງຕາມການສຳຫຼວດຂອງທະນາຄານໂລກໃນປະເທດກຳປູເຈຍ ປີ 2013, ໄດ້ມີການອະນຸມັດໃຫ້ສ້າງຕັ້ງເຂດເສດຖະກິດພິເສດຂຶ້ນໃນປະເທດຈຳນວນ 22 ແຫ່ງ, ຊຶ່ງສ່ວນໃຫ່ຍແມ່ນ ຕັ້ງຢູ່ເຂດຊາຍແດນ ໂດຍສະເພາະແມ່ນໃກ້ກັບຊາຍແດນປະເທດໄທ ແລະ ປະເທດ ຫວຽດນາມ ແລະ ໃກ້ກັບຊາຍຝັ່ງທະເລ. ສະພາພັດທະນາປະເທດກຳປູເຈຍ,ໂດຍສະເພາະຄະນະກຳມະການການລົງທຶນ ກຳປູຈາ ໄດ້ມີນະໂຍບາຍການດຶງດູດ ຫຼື ການຈູງໃຈທາງດ້ານພາສີ ໃຫ້ແກ່ໂຄງການການລົງທຶນທີ່ມີປະສິບການ ແລະ ມີປະສິດທິພາບ. ຊຶ່ງໃນນີ້ລວມທັງການຍົກເວັ້ນພາສີ ໃນການນຳເຂົ້າວັດຖຸອຸປະກອນ, ວັດຖຸດິບ ທີ່ນຳໃຊ້ເຂົ້າໃນການກໍ່ສ້າງ ຫຼື ການຜະລິດເພື່ອສົ່ງອອກ ແລະ ຍົກເວັ້ນອາກອນລາຍໄດ້. ບູລິມະສິດໃນການຍົກເວັ້ນອາກອນ ແມ່ນແລ້ວແຕ່ກິດຈະການ ແລະ ເຂດທີໄດ້ຮັບການສົ່ງເສີມ ແລະ ສິດທິທາງດ້ານຜົນປະໂຫຍດອື່ນໆ ໃນນີ້ລວມທັງ ການເຊົ່າ ຫຼື ສຳປະທານທີດິນ ເປັນເວລາ 50 ປີ ( ສາມາດຕໍ່ ຫຼື ໂອນກຳມະສິດໄດ້) ນອກຈາກນີ້, ຍັງອຳນວຍຄວາມສະດວກ ໃນການແລກປ່ຽນເງິນຕາແບບບໍ່ຈຳກັດຈຳນວນ ແລະ ການເຄື່ອນຍ້າຍເງິນທຶນ.

ການພັດທະນາ ເຂດເສດຖະກິດພິເສດຂອງກຳປູເຈຍ ແມ່ນໄດ້ຮັບການສຶກສາ ແລະ ບົດຮຽນຈາກຫຼາຍປະເທດ ໂດຍສະເພາະແມ່ນປະເທດຈີນ, ຍົກຕົວຢ່າງ ເຂດເສດຖະກິດພິເສດ ສີຮານຸວິວ (Sihanoukville) ເປັນຕົ້ນແມ່ນ ການປະຕິຮູບທາງດ້ານການດຳເນີນທຸລະກິດ, ການປະຕິຮູບທາງດ້ານການຕະຫຼາດ ແລະ ປັບປຸງພັດທະນາຂະແໜງການສຶກສາ, ການຄ້າການ, ອຸດສະຫະກຳການກະເສດ, ແລະ ການພັດທະນາພື້ນຖານໂຄງລ່າງ.

**ຕາມປະສົບການຂອງ ສປປ ຈີນ ນັ້ນເຫັນວ່າໄດ້ຮັບ ຜົນປະໂຫຍດຫຼາຍພໍສົມຄວນໃນການສ້າງຕັ້ງເຂດເສດຖະກິດພິເສດ, ເພາະວ່າເຂດດັ່ງກ່າວນີ້** ໄດ້ສ້າງແຮງຈູງໃຈທີ່ຫຼາກຫຼາຍຕໍ່ເຈົ້າຂອງທຸລະກິດທີ່ກຳລັງດຳເນີນກິດຈະການຢູ່ໃນ ຂພສ. ປັດໄຈອັນສຳຄັນແມ່ນຜົນປະໂຫຍດດ້ານພາສີ, ຊຶ່ງຈຸດປະສົງແມ່ນເນັ້ນເປົ້າໝາຍເພື່ອດຶງດູດການລົງທຶນຕ່າງປະເທດ, ຜົນປະໂຫຍດທາງດ້ານພາສີທີ່ພົ້ນເດັ່ນທີ່ສຸດແມ່ນໝາຍຄວາມວ່າຖ້າການດຳເນີນທຸລະກິດບໍ່ສາມາດສ້າງກຳໄລ, ກໍ່ບໍ່ຈຳເປັນຕ້ອງເສຍພາສີ.

ເຂດເສດຖະກິດພິເສດຫຼາຍແຫ່ງມີລະດັບພາສີລາຍໄດ້ຫຼຸດລົງ, ຕໍ່າກ່ວາ 15% ໃນເຂດເສດຖະກິດພິເສດຮົງກົງ, ໃນຂະນະທີ່ຢູ່ແຜ່ນດິນໃຫຍ່ຂອງຈີນ, ອັດຕານີ້ແມ່ນປົກກະຕິສູງເຖິງ 33%. ດ້ວຍເສດຖະກິດຂອງຈີນແມ່ນເໜັ້ນການສົ່ງອອກເປັນຫຼັກ. ນີ້ລວມທັງບັນດາບໍລິສັດທີ່ສາມາດສົ່ງອອກສິນຄ້າໂດຍບໍ່ເສຍຄ່າ, ພ້ອມທັງໄດ້ຮັບການຍົກເວັ້ນພາສີທ້ອງຖິ່ນໃນບາງອຸດສາຫະກຳ. ຜົນປະໂຫຍດຂອງເຂດເສດຖະກິດພິເສດເຫຼົ່ານີ້ໃນປະເທດຈີນສາມາດເຫັນໄດ້ໂດຍກົງ

ໃນການພັດທະນາເຂດເສດຖະກິດທີ່ຖືກສ້າງຕັ້ງຂຶ້ນ. ຕົວຢ່າງ, ເຂດເສດຖະກິດເຊັ່ງ, ຫຼັງຈາກໄດ້ຖືກ ກຳນົດໃຫ້ເປັນໜຶ່ງໃນເຂດເສດຖະກິດພິເສດທຳອິດ, ເມືອງດັ່ງກ່າວໄດ້ເຕີບໃຫຍ່ຂຶ້ນຈາກການເປັນບ້ານນ້ອຍໆສູ່ເມືອງທີ່ມີປະຊາກອນຫຼາຍກວ່າ 10 ລ້ານຄົນພາຍໃນສອງສາມທົດສະວັດ.

ນອກຈາກນີ້, ການສ້າງເຂດທີ່ມີເງື່ອນໄຂທາງດ້ານການຄ້າຊ່ວຍເພີ່ມອັດຕາການຈ້າງງານ, ຍົກສູງຊີວິດການເປັນຢູ່ໂດຍລວມໃຫ້ດີຂຶ້ນ ຊຶ່ງແມ່ນວິທີການທີ່ສະຫລາດ ທີ່ຈະສຸມໃສ່ການເຕີບໂຕໃນເຂດເພື່ອລະດັບການພັດທະນາທີລົງທຶນ ເຂົ້າໃນພື້ນຖານໂຄງລ່າງໃຫ້ມີປະສິດຕິພາບສູງຂຶ້ນ ແລະ ການເຊື່ອມໂຍງເຂົ້າໃນກິດຈະກຳການຄ້າສາກົນກໍ່ແມ່ນຈຸດປະສົງຫຼັກຂອງການສ້າງຕັ້ງເຂດເສດຖະກິດພິເສດ.

ໜຶ່ງໃນຈຸດປະສົງສຳລັບເຂດເຫຼົ່ານັ້ນແມ່ນເພື່ອການຄ້າ, ການທົດລອງ ນຳໃຊ້ລະບຽບການທີ່ແຕກຕ່າງກັນກໍ່ມີປະໂຫຍດ ແລະ ຜົນໄດ້ຮັບຕ່າງກັນ ຄືໃນຊຸມປີ 1980 ຫຼາຍບໍລິສັດໄດ້ຖອນການລົງທຶນພາຍໃນປະເທດຈີນ ຍ້ອນນັກລົງທຶນພົບວ່າລະບຽບຂັ້ນຕອນຂອງປະເທດມີຄວາມສັບສົນຫຼາຍ. ເຖິງຢ່າງໃດກໍ່ຕາມ, ໃນປີ 1982, ລະບຽບຫຼັກການໄດ້ມີການປັບປຸງຄືນໃໝ່ ເພື່ອໃຫ້ຂະບວນການໃນການສ້າງຕັ້ງງ່າຍດາຍຂຶ້ນກວ່າເກົ່າ ແລະ ເຮັດໃຫ້ລະດັບການລົງທຶນຢູ່ໃນປະເທດມີການປັບປຸງໃຫ້ສອດຄ່ອງຂຶ້ນ. ໃນໄລຍະ 30 ປີທີ່ຜ່ານມາ, ຈີນໄດ້ປະສົບຜົນສຳເລັດສູງ ແລະ ເຮັດໃຫ້ເສດຖະກິດໃນລະດັບທີ່ໜ້າເພິງພໍໃຈ.

ການພັດທະນາ ຂພສ ແມ່ນການພັດທະນາເຂດທີ່ລັດຖະບານກຳນົດໃຫ້ເປັນເຂດພັດທະນາ, ຈາກພື້ນທີ ທີ່ມີຄວາມຫຍຸ້ງຍາກໃນການພັດທະນາໃຫ້ສາມາດພັດທະນາໃຫ້ເປັນເຂດທີ່ທັນສະໄໝ ພາຍໃນປະເທດ, ໃນພາກພື້ນ ແລະ ສາກົນ ເຊັ່ນ: ສິງກະໂປ, ຮົງກົງ, ເມືອງດູໄບ ປະເທດສະຫະລັດອາມີເລັບ ແລະ ອິນເດຍ ໂດຍສະເພາະການດຶງດູການລົງທຶນທີມີມູນຄ່າສູງ ເພື່ອສ້າງເງື່ອນໄຂສະພາບແວດລ້ອມ ທີ່ເອື້ອຍອຳນວຍຄວາມສະດວກໃຫ້ແກ່ການລົງທຶນທີ່ສາມາດແຂ່ງຂັນໃນລະດັບສາກົນ, ການສ້າງວຽກເຮັດງານທຳໃນເຂດດັ່ງກ່າວອາດຈະກວມໄປເຖິງວຽກງານທີ່ນຳໃຊ້ສີມືແຮງງານທີ່ມີທັກສະ, ລວມໄປເຖິງນັກວິຊາການ, ນັກອອກແບບ, ຄູອາຈານ ຫຼືນັກພັດທະນາໄອທີ.

ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ ກ່ຽວກັບບົດຮຽນ ແລະ ປະສົບການຂອງຈີນໃນການສ້າງຕັ້ງ ເຂດເສດຖະກິດພິເສດ ໂດຍສະເພາະແມ່ນການສ້າງເຂດເສດຖະກິດພິເສດ ເຊີນເຈີນ ໄດ້ມີບົດບາດສຳຄັນຫຼາຍໃນການປະຕິຮູບເສດຖະກິດຂອງປະເທດຈີນ ຈາກການເປີດປະຕູສູ່ການພັດທະນາການຜະລິດສິນຄ້າທຸກຢ່າງໂດຍລັດຖະບານກາງແບບເສດຖະກິດຕາມແຜນເປັນທາງຂອງລະບົບຕະຫຼາດຕັ້ງແຕ່ປີ 2523 ເຂດເສດຖະກິດພິເສດເຊີນເຈີນຄືເຂດເສດຖະກິດແຫ່ງທຳອິດຂອງ ສປຈີນ ຊຶ່ງຈັດຕັ້ງຂຶ້ນເພື່ອເປັນແມ່ແບບໃນການພັດທະນາ ຈາກການພັດທະນາໝູ່ບ້ານທີມີອາຊີບຫາປາ ໃນມົນທົນກວາງຕຸ້ງ ທີມີປະຊາກອນປະມານ 30,000 ຄົນ ໃນປີ 1980, ປັດຈຸບັນກາຍເປັນສູນກາງທາງດ້ານການເງິນ ແລະ ອຸດສະຫະກຳ ດ້ວຍນະໂຍບາຍເສດຖະກິດແບບເສລີ ໂດຍລັດຖະບານກາງ , ມີຂັ້ນຕອນທີ່ໜ້າສົນໃຈ ແລະ ມີປະໂຫຍດຕໍ່ການພັດທະນາຂອງປະເທດ, ຈາກໝູ່ບ້ານຊາວປະມົງສາມາດພັດທະນາໃຫ້ເປັນພື້ນທີທີ່ສ້າງລາຍໄດ້ໃຫ້ລັດຖະບານກາງຫຼາຍກວ່າ 200,000 ລ້ານຢວນ, ມີໂຮງຮຽນ ແລະ ສະຖາບັນການສຶກສາໃນລະດັບຕ່າງໆ ກວ່າ 1400 ແຫ່ງ ແລະ ສາມາດສ້າງວຽກເຮັດງານທຳປີລະ ຫຼາຍກວ່າ 6 ລ້ານຄົນດັ່ງຄຳກ່າວຂອງຄົນຈີນທີ່ວ່າ "ບໍ່ໄດ້ຢູ່ປັກກິ່ງກໍ່ບໍ່ຮູ້ວ່າຕົນເອງຕໍາຕ້ອຍພຽງໃດ ບໍ່ໄດ້ຢູ່ເຊີນເຈີນ ກໍ່ບໍ່ຮູ້ວ່າຕົນເອງຈົນຂະໜາດໃດ"

ປະສົບການພັດທະນາເມືອງເຊີນເຈີນນັ້ນ ໄດ້ສະແດງໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງ ເຂດເສດຖະກິດພິເສດ ແລະ ເຂດອຸດສະຫະກຳ. ເຂດເສດຖະກິດພິເສດນັ້ນ ໄດ້ກຳນົດໃຫ້ເປັນເຂດປະຕິຮູບທາງດ້ານເສດຖະກິດເຕັມຮູບແບບ ແລະ ເປັນແບບຢ່າງໃຫ້ແກ່ການພັດທະນາໃນພື້ນທີອື່ນ, ສ່ວນເຂດອຸດສະຫະກຳ ຄືສ່ວນປະກອບໜຶ່ງ

ທີ່ສະໜັບສະໜູນເຂດເສດຖະກິດພິເສດ ໂດຍເຂດອຸດສະຫະກຳຈະເໜັ້ນຖານການຜະລິດ ທາງດ້ານອຸດສະຫະກຳເປັນຫຼັກ, ອີກຢ່າງໜຶ່ງ ເຂດເສດຖະກິດພິເສດໃນຈີນນັ້ນຕ້ອງໄດ້ຮັບການອະນຸມັດຈາກລັດຖະບານກາງ ແຕ່ເຂດອຸດສະຫະກຳສາມາດໄດ້ຮັບການອະນຸມັດ ຈາກມົນລົງ ຫຼື ລັດຖະບານທ້ອງຖິ່ນ ໃນປີ 2550 ປະເທດຈີນມີເຂດອຸດສະຫະກຳຫຼາຍກວ່າ 1500 ແຫ່ງ ແຕ່ມີເຂດເສດຖະກິດພິເສດຢູ່ພຽງ 5 ແຫ່ງເທົ່ານັ້ນ.

ໃນປັດຈຸບັນ ຍັງບໍ່ມີຫຼາຍປະເທດທີ່ມີເຂດເສດຖະກິດພິເສດ ຊຶ່ງສ່ວນໃຫ່ຍຈະມີພຽງແຕ່ເຂດອຸດສະຫະກຳຊຶ່ງນະໂຍບາຍລັດຖະບານສ່ວນໃຫ່ຍຈະຄາດຫັວງໃຫ້ເຂດອຸດສະຫະກຳເປັນຕົວຂັບເຄື່ອນການພັດທະນາເສດຖະກິດແຕ່ກໍ່ບໍ່ສາມາດເຮັດໃຫ້ການເຕີບໂຕແລະພັດທະນາເສດຖະກິດໄດ້ຢ່າງຍືນຍົງ. ດັ່ງນັ້ນ ການໃຫ້ຄວາມສຳຄັນຂອງກັບເຂດເສດຖະກິດພິເສດ ເພື່ອໃຫ້ນຳໄປສູ່ການພັດທະນາການປະຕິຮູບເສດຖະກິດໃຫ້ປະສົບຜົນສຳເລັດໃນພື້ນທີ່ອື່ນຈຶ່ງມີຄວາມສຳຄັນຫຼາຍ ໃນຂະນະດຽວກັນການພັດທະນາຂດເສດຖະກິດພິເສດ, ນອກຈາກ ຈະເປັນການດຶງດູດແຮງງານທີ່ມີສີມືໃຫ້ມາທຳງານໃນປະເທດແລ້ວ ຍັງສາມາດດຶງດູດເງິນລົງທຶນຈາກຕ່າງປະເທດ ( Foreign Direct Investment: FDI) ເພື່ອພັດທະນາໝູ່ບ້ານ ຫຼື ເຂດດັ່ງກ່າວນັ້ນໃຫ້ເປັນສູນກາງທາງດ້ານການເງິນ ແລະ ການລົງທຶນ, ນອກຈາກນີ້, ຍັງຊ່ວຍພັດທະນາຄຸນນະພາບຊີວິດ ແລະ ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນລົງໄດ້ ໂດຍສະເພາະ ການເປັນຕົວເມືອງຕົວຢ່າງສຳລັບການຢູ່ຮ່ວມກັນລະຫວ່າງເຂດອຸດສະຫະກຳ ແລະ ເຂດຊົນນະບົດ ທີ່ສາມາດສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຈົນນຳໄປສູ່ການພັດທະນາປະເທດໄດ້ຢ່າງຍັ້ງຢືນ.

ເຂດເສດຖະກິດເຊີນເຈີນ ແມ່ນປະສົບຜົນສຳເລັດໃນລະດັບທີ່ດີ ສາມາດພັດທະນາເຂດດັ່ງກ່າວໄດ້ຢ່າງວ່ອງໄວ ມີຄວາມຈະເລີນກຽບຈະທັນຮອງກົງ ຊຶ່ງມີຫຼາຍປະເທດໄດ້ນຳເອົານະໂຍບາຍເຂດເສດຖະກິດພິເສດໄປປະຍຸກໃຊ້ໃນປະເທດຂອງຕົນ.

ສະເພາະ ສສ ຫວຽດນາມ ກໍ່ໄດ້ມີການສ້າງຕັ້ງເຂດເສດຖະກິດຫຼາຍແຫ່ງໃນທົ່ວປະເທດ, ຖືວ່າເປັນປັດໄຈສຳຄັນໃນການດຶງດູດການລົງທຶນຈາກຕ່າງປະເທດໃຫ້ເຂົ້າມາລົງທຶນໃນວຽດນາມ ຊຶ່ງໄດ້ມີການສຶກສາແນວທາງ ແລະ ຮູບແບບ ໃນການຈັດຕັ້ງເຂດເສດຖະກິດຈາກ ໄຕ້ຫວັນ, ສິງກາໂປ ແລະ ຈີນ ເພື່ອມາເປັນຕົ້ນແບບໃນການພັດທະນາເສດຖະກິດພາຍໃນປະເທດ. ຊຶ່ງເຂດເຂດຖະກິດຂອງຫວຽດນາມແບ່ງອອກເປັນ ສີ່ ປະເພດດັ່ງນີ້: ເຂດເສດຖະກິດທີ່ເໜັ້ນອຸດສະຫະກຳການຜະລິດສິນຄ້າເພື່ອສົ່ງອອກ, ໄດ້ມີການຈັດລະບົບຕ່າງໆ ເພື່ອໃຫ້ການບໍລິການ ແລະ ການຜະລິດມີຄວາມສະດວກ ເພື່ອໃຫ້ນັກລົງທຶນ ທີເຂົ້າມາລົງທຶນໃນເຂດສາມາດດຳເນີນທຸລະກິດໄດ້ຢ່າງເປັນລະບົບ ແລະ ຕໍ່ເນື່ອງ; ເຂດເສດຖະກິດອຸດສະຫະກຳ ຊຶ່ງເໜັ້ນຜະລິດສິນຄ້າເພື່ອຈຳໜ່າຍພາຍໃນປະເທດ; ເຂດເສດຖະກິດທີ່ສ້າງຕັ້ງຂຶ້ນເພື່ອສົ່ງເສີມການວິໄຈ ແລະ ພັດທະນາ ລວມທັງການຜະລິດສິນຄ້າທີ່ໃຊ້ເຕັກໂນຍີທີ່ທັນສະໄໝ; ເຂດເສດຖະກິດພິເສດທີສ້າງຕັ້ງຂຶ້ນເພື່ອດຶງດູດການລົງທຶນຈາກຕ່າງປະເທດຈຶ່ງໃຫ້ຄວາມສຳຄັນກັບນະໂຍບາຍດ້ານການຍົກເວັ້ນພາສີ ແລະ ການໃນໃຊ້ທີດິນ ເພື່ອເປັນການກະຕຸ້ນແຮງຈູງໃຈໃຫ້ກັບຜູ້ເລີ່ມຕົ້ນການລົງທຶນ ຊຶ່ງເຮັດໃຫ້ຜູ້ລົງທຶນ ແລະ ຜູ້ທີອາໄສຢູ່ໃນເຂດດັ່ງກ່າວໄດ້ຮັບສິດທິ ແລະ ຜົນປະໂຫຍດຈາກການສ້າງຕັ້ງເຂດດັ່ງກ່າວ.

ໃນປັດຈຸບັນ ຫວຽດນາມໄດ້ໃຫ້ຄວາມສຳຄັນໃນການສ້າງຕັ້ງເຂດດັ່ງກ່າວ ເພື່ອສົ່ງເສີມ ແລະ ນຳພາປະເທດໃຫ້ກາຍເປັນສູນກາງດ້ານເຕັກໂນໂລຍີແຫ່ງໃໝ່ຂອງອາຊີ,ຊຶ່ງໂຄງການເຫຼົ່ານີ້ສະແດງເຖິງຄວາມພ້ອມຂອງເສດຖະກິດຫວຽດນາມທີ່ຈະເພີ່ມຄວາມໜ້າລົງທຶນ ເປັນຕົ້ນແມ່ນທາງດ້ານອຸດສະຫະກຳ ແລະ ເຕັກໂນໂລຊີໃນອານາຄົດ.

ນະໂຍບາຍສົ່ງເສີມແຕ່ລະເຂດນັ້ນກໍ່ໄດ້ມີການກຳນົດທີ່ແຕກຕ່າງກັນ, ຊຶ່ງປະເພດທຸລະກິດທີ່ລັດຖະບານມີການສົ່ງເສີມໃນຫວຽດນາມຄື: ອຸດສະຫະກຳເຕັກໂນໂລຊີ, ໂຄງສ້າງພື້ນຖານໂຄງລ່າງ ແລະ ອຸດສະຫະກຳການກະເສດ. ສ່ວນພື້ນທີ ທີ່ລັດຖະບານສະໜັບສະໜູນການລົງທຶນຄື ເຂດເສດຖະກິດພິເສດ ແລະ ພື້ນທີທີ່ດ້ອຍການພັດທະນາ.

ແນວໃດກໍ່ຕາມ, ເຂດເສດຖະກິດພິເສດແຕ່ລະເຂດແມ່ນມີຄວາມສຳຄັນ ແລະ ນະໂຍບາຍທີແຕກຕ່າງກັນ ທັ້ງນີ້ກໍ່ເນື່ອງມາຈາກທີຕັ້ງ ແລະ ເປົ້າໝາຍຂອງແຕ່ລະເຂດ, ເນື່ອງຈາກວ່ານະໂຍບາຍສົ່ງເສີມແຕ່ລະເຂດມີຄວາມແຕກຕ່າງກັນ. ສະນັ້ນ, ຜູ້ລົງທຶນຄວນຕ້ອງໄດ້ສຶກສາກ່ຽວກັບລະບຽບ, ນະໂຍບາຍຕ່າງໆຈາກໜ່ວຍງານ ຫຼື ພາກສ່ວນທກ່ຽວຂ້ອງໃຫ້ລະອຽດສາກອ່ນເພື່ອຜົນປະໂຫຍດ ແລະ ສິດທິຂອງຜູ້ລົງທຶນເອງ. ນອກຈາກນີ້, ຜູ້ລົງທຶນຄວນຈະຕ້ອງໄດ້ກຽມຄວາມພ້ອມໃນການພັດທະນາຂີດຄວາມສາມາດຂອງຕົນເພື່ອສາມາດແຂ່ງຂັນໃຫ້ກັບກິດຈະການຂອງຕົນ ເປັນຕົ້ນແມ່ນ ປັບປຸງຄຸນນະພາບຜະລິດຕະພັນຂອງຕົນ, ເພີ່ມຄຸນຄ່າໃຫ້ກັບສິນຄ້າ ແລະ ການບໍການຂອງຕົນ, ການພັດທະນາຄຸນນະພາບ ແລະ ມາດຖານການຜະລິດຕະພັນ ແລະ ການຫາໂອກາດ ຫຼື ຊ່ອງທາງໃນການຂະຫຍາຍຕະຫຼາດ ເພື່ອສ້າງຄວາມເຂັ້ມແຂງ ແລະ ໂອກາດໃນການປະກອບທຸລະກິດແກ່ຜູ້ປະກອບການໃຫ້ມີຄວາມສຳເລັດ ແລະ ເຮັດໃຫ້ກິດຈະການມີການເຕີບໃຫ່ຍຂະຫຍາຍຕົວຢ່າງຍືນຍົງ.

## ເອກະສານອ້າງອີງ


1. ວາລະສານຂອງກົມອຸດສະຫະກຳ, ຊອງລາດຊະອານາຈັກໄທ, ສະບັບເດືອນກຸມພາ ປີ ພສ 2559;
2. ສັງລວມບົດຮຽນ ແລະ ປະສົບການເຂດເສດເຂດຖະກິດພິເສດຈາກ ສາກົນ, ໂດຍ Douglas Zhihua Zeng.